(ບົດແປບໍ່ເປັນທາງການ)

**ບົດປາໄສ ຂອງ ສະຫາຍ ສີຈິ້ນຜິງ,**

**ໃນກອງປະຊຸມສົນທະນາລະດັບສູງ ລະຫວ່າງ ພັກກອມມູນິດຈີນ ກັບ ບັນດາພັກການເມືອງໃນໂລກ**

**ນະຄອນຫຼວງປັກກິ່ງ, ວັນທີ 01 ທັນວາ 2017**

**<u>ຫົວຂໍ້</u>: ຮ່ວມກັນສ້າງໂລກທີ່ສວຍງາມກວ່າເກົ່າ**

**ຮຽນ: ບັນດາການນຳ ຂອງ ພັກການເມືອງຈາກບັນດາປະເທດ,**

**ທ່ານຍິງ, ທ່ານຊາຍ, ເພື່ອນມິດທັງຫຼາຍ**

ສະບາຍດີຕອນບ່າຍ. ມື້ນີ້, ຂ້າພະເຈົ້າຮູ້ສຶກດີໃຈເປັນຢ່າງຍິ່ງ ທີ່ມີໂອກາດພົບກັບບັນດາການນຳຈາກພັກການເມືອງ ແລະ ອົງການຈັດຕັ້ງການເມືອງ ຂອງ ບັນດາປະເທດໃນໂລກ ທີ່ເຂົ້າຮ່ວມກອງປະຊຸມສົນທະນາລະດັບສູງ ລະຫວ່າງ ພັກກອມມູນິດຈີນ ກັບ ບັນດາພັກການເມືອງໃນໂລກຄັ້ງນີ້. ໃນໄລຍະທ້າຍປີ, ບັນດາທ່ານ (ພວກເຮົາ) ລ້ວນແຕ່ມີວຽກຫຼາຍ ແຕ່ກໍ່ຍັງໄດ້ຍາດເອົາເວລາອັນມີຄ່າມາເຕົ້າໂຮມກັນຢູ່ທີ່ນະຄອນຫຼວງປັກກິ່ງ ເພື່ອຮ່ວມກັນປຶກສາຫາລື ແລະ ວາງແຜນອະນາຄົດຂອງການຮ່ວມມືນຳກັນ, ເຊິ່ງໄດ້ສະແດງໃຫ້ເຫັນວ່າບັນດາທ່ານລ້ວນແຕ່ມີຄວາມເອົາໃຈໃສ່ ຕໍ່ ການພັດທະນາຂອງມວນມະນຸດ ແລະ ອະນາຄົດຊາຕາກຳຂອງໂລກ.

ຢູ່ນະທີ່ນີ້, ຂ້າພະເຈົ້າ ຂໍຖືເປັນກຽດຕາງໜ້າໃຫ້ພັກກອມມູນິດຈີນ ແລະ ໃນນາມສ່ວນຕົວ ຂໍສະແດງຄວາມຍິນດີຕ້ອນຮັບຢ່າງສຸດອົກສຸດໃຈ ມາຍັງ ເພື່ອນມິດຈາກບັນດາປະເທດທີ່ເຕົ້າໂຮມຢູ່ທີ່ນີ້. ໃນໄລຍະດຳເນີນກອງປະຊຸມໃຫຍ່ ຄັ້ງທີ XIX ຂອງ ພັກກອມມູນິດຈີນ ໄດ້ມີຫຼາຍພັກການເມືອງ ແລະ ອົງການຈັດຕັ້ງການເມືອງ ກໍ່ຄື ການນຳຂອງບັນດາພັກການເມືອງ ໄດ້ສົ່ງສານຊົມເຊີຍມາສະແດງຄວາມຍິນດີ, ຂ້າພະເຈົ້າ ຂໍຖືໂອກາດໃນມື້ນີ້ ສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈມາຍັງບັນດາທ່ານນະທີ່ນີ້ດ້ວຍ.

ກອງປະຊຸມໃຫຍ່ ຄັ້ງທີ XIX ຂອງພັກກອມມູນິດຈີນ ໄດ້ວາງແຜນອະນາຄົດການພັດທະນາຂອງປະເທດຈີນ ນັບແຕ່ປະຈຸບັນ ຈົນຮອດ ກາງສະຕະວັດນີ້ ແລະ ໄດ້ປະກາດເຖິງຄວາມມຸ້ງຫວັງຢ່າງຈິງໃຈຂອງຝ່າຍຈີນທີ່ຍິນດີຈະຮ່ວມກັບທຸກຝ່າຍ ໃນການຊຸກຍູ້ສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ. ພັກການເມືອງ ມີບົດບາດສຳຄັນໃນຊີວິດການເມືອງຂອງປະເທດ, ທັງເປັນກຳລັງແຮງສຳຄັນໃນການຊຸກຍູ້ຄວາມກ້າວໜ້າຂອງອາລິຍະທຳມວນມະນຸດ. ບັນດາທ່ານທີ່ນັ່ງຢູ່ທີ່ນີ້ ກໍ່ລ້ວນແລ້ວແຕ່ແມ່ນການ ນຳຈາກເກືອບ 300 ກວ່າ ພັກການເມືອງ ແລະ ການຈັດຕັ້ງການເມືອງ ຂອງ ບັນດາປະເທດໃນໂລກ. ຂ້າພະເຈົ້າ ຍິນດີຈະແລກປ່ຽນຄຳຄິດເຫັນ ແລະ ຄວາມຮູ້ສຶກ ກັບບັນດາທ່ານ ໃນໂອກາດດັ່ງກ່າວນີ້.

ທ່ານຍິງ, ທ່ານຊາຍ, ເພື່ອນມິດທັງຫຼາຍ!

ນັບແຕ່ບູຮານະການມາຮອດປະຈຸບັນ, ການສະແຫວງຫາຊີວິດການເປັນຢູ່ທີ່ມີຄວາມຜາສຸກດີງາມນັ້ນຍາມໃດກໍ່ຍັງແມ່ນຄວາມໄຝ່ຝັນຂອງມວນມະນຸດ. ໃນປະຫວັດສາດການພັດທະນາອາລິຍະທຳຫຼາຍພັນປີ ຜ່ານມານີ້, ມະນຸດໄດ້ປະດິດສ້າງໝາກຜົນອາລິຍະທຳທີ່ສະຫງ່າງາມ, ແຕ່ວ່າສົງຄາມ ແລະ ການປະທະກັນພັດບໍ່ເຄີຍພັກເຊົາຈັກເທື່ອ, ຄຽງຄູ່ກັນນັ້ນ ໄພພິບັດທາງທຳມະຊາດ ແລະ ພະຍາດບາດເຍັບຕ່າງໆ ໄດ້ເຮັດໃຫ້ຄົນເຮົາຜ່ານຜ່າຄວາມຫຍຸ້ງຍາກນາໆປະການ ແລະ ໄດ້ມີການສູນເສຍຢ່າງເຈັບແສບ. ປະຈຸບັນ, ລະບົບອິນເຕີເນັດ, ຄັງຂໍ້ມູນໃຫຍ່, ການຄິດໄລ່ເມກ (cloud computing), ດາວທຽມສື່ສານຄວານທຸມ (Quantum communication satellite), ລະບົບຫຸ່ນຍົນອັດສະລິຍະ (Artificial Intelligence) ໄດ້ພັດ ທະນາໄປຢ່າງວ່ອງໄວ ແລະ ໄດ້ເຊື່ອມໂຍງເຂົ້າກັບຊີວິດການເປັນຢູ່ຂອງມະນຸດແບບບໍ່ເຄີຍມີມາກ່ອນ, ພ້ອມນັ້ນ ບັນຫາໂລກາພິວັດທີ່ມະນຸດໄດ້ປະເຊີນໜ້າມີຈຳນວນຫຼາຍ, ຂະໜາດໃຫຍ່ ແລະ ເລິກເຊິ່ງນັ້ນກໍ່ເປັນແບບບໍ່ເຄີຍມີມາກ່ອນເຊັ່ນກັນ.

ໃນເວລາປະເຊີນໜ້າກັບສະພາບການດັ່ງກ່າວ, ມະນຸດມີ 2 ທາງເລືອກ ຄື: ໜຶ່ງ, ຄົນເຮົາຈະມີການແຂ່ງຂັນກັນຢ່າງຮ້າຍກາດ ຫລື ມີການໃຊ້ກຳລັງອາວຸດໃສ່ກັນ ເພື່ອຍາດແຍ່ງອຳນາດ ແລະ ຜົນປະໂຫຍດ, ເຊິ່ງຈະເປັນການນຳເອົາວິກິດການທີ່ເປັນຫາຍະນະມາກໍ່ເປັນໄດ້. ອີກດ້ານໜຶ່ງ, ຄົນເຮົາຈະເດີນຕາມກະແສການພັດທະນາຂອງຍຸກສະໄໝ, ຮ່ວມແຮງຮ່ວມໃຈກັນຮັບມືກັບສິ່ງທ້າທາຍ ແລະ ດຳເນີນການປະສານສົມທົບ ຮ່ວມມືກັນທົ່ວໂລກ, ເຊິ່ງຈະເປັນການສ້າງເງື່ອນໄຂທີ່ດີໃຫ້ແກ່ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ. ພວກເຮົາຄວນກຳແໜ້ນກາລະໂອກາດທາງປະຫວັດສາດ, ມີການເລືອກເສັ້ນທາງທີ່ຖືກຕ້ອງ ແລະ ຮ່ວມກັນບຸກເບີກອະນາຄົດອັນແຈ່ມໃສກວ່າເກົ່າຂອງມວນມະນຸດ.

ເຊື້ອຊາດຈີນ ມີປະຫວັດສາດຍາວນານ ແລະ ມີອາລິຍະທຳທີ່ຈະເລີນຮຸ່ງເຮືອງ, ແຕ່ວ່າພາຍຫຼັງປະຫວັດສາດໃໝ່ມໍ່ໆມານີ້ ໄດ້ຜ່ານຜ່າການທົດສອບດ້ວຍ ເລືອດ ແລະ ແປວໄຟ. ປະຊາຊົນຈີນ ບໍ່ໄດ້ຍອມຈຳ ນົນຕໍ່ຊາຕາກຳ, ແຕ່ພັດໄດ້ປຸກລະດົມຈິດໃຈລຸກຮື້ຂຶ້ນຕໍ່ສູ້, ສ້າງຄວາມເຂັ້ມແຂງດ້ວຍຕົນເອງຢ່າງບໍ່ລົດລະ, ໄດ້ຜ່ານຜ່າການຕໍ່ສູ້ເປັນເວລາຍາວນານ, ຈີນສາມາດກ້າວຂຶ້ນສູ່ເສັ້ນທາງອັນເຂັ້ມແຂງໜັກແໜ້ນ ໃນການບັນລຸການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງເຊື້ອຊາດຈີນດັ່ງໃນທຸກມື້ນີ້. ເມື່ອຫວນຄືນປະຫວັດສາດ, ສິ່ງທີ່ຄ້ຳຈູນໃຫ້ເຊື້ອຊາດເກົ່າແກ່ຂອງພວກຂ້າພະເຈົ້າໃຫ້ເດີນມາຮອດທຸກມື້ນີ້ໄດ້ ແລະ ຄ້ຳຈູນໃຫ້ອາລິຍະທຳເຊື້ອຊາດຈີນ 5000 ກວ່າປີ ສາມາດສືບທອດມາໄດ້ສູ່ມື້ນີ້ ກໍ່ແມ່ນເຊວຈຸລັງວັດທະນະທຳທີ່ປູກຝັງໄວ້ຢູ່ໃນພື້ນເລິກໃນສາຍເລືອດຂອງເຊື້ອຊາດຈີນ. ຕະຫຼອດໄລຍະປະຫວັດສາດຜ່ານມາ, ເຊື້ອຊາດຈີນໄດ້ເນັ້ນໜັກ ຖືເອົາ “ໃຕ້ຟ້ານີ້ ລ້ວນແຕ່ແມ່ນຄອບຄົວດຽວກັນ”, ເນັ້ນໜັກວ່າ ຄົນທັງຫຼາຍ ແລະ ຊັບພະສິ່ງຢູ່ຮ່ວມກັນຢ່າງສັນຕິປອງດອງ, ທົ່ວໃຕ້ຟ້າຈະມີຄວາມກົມກຽວປອງດອງກັນ ແລະ ເປັນໂລກທີ່ສວຍງາມ ດັ່ງຄຳເວົ້າບູຮານກ່າວວ່າ: “ໃຕ້ຟ້ານີ້ແມ່ນຂອງທຸກຄົນ, ມີແຕ່ບັນລຸການສ້າງຄວາມສະເໝີພາບ, ກຳຈັດຄວາມເຫັນແກ່ຕົວ ຈິ່ງຈະສາມາດເຮັດໃຫ້ສັງຄົມມີອະນາຄົດແຈ່ມໃສ, ປະຊາຊົນຈິ່ງຈະມີຊີວິດການເປັນຢູ່ທີ່ດີ”. ພວກຂ້າພະເຈົ້າເຫັນວ່າ, ເຖິງແມ່ນວ່າບັນດາປະເທດໃນໂລກຈະມີຄວາມຂັດແຍ້ງທີ່ແຕກຕ່າງກັນໄປ ແລະແນ່ນອນວ່າຈະຫຼີກລ່ຽງບໍ່ໃຫ້ເກີດມີການກະທົບກະທັ່ງກັນບໍ່ໄດ້, ແຕ່ວ່າປະຊາຊາດໃນໂລກຕ່າງກໍ່ລ້ວນດຳລົງຊີວິດຢູ່ພາຍໃຕ້ທ້ອງຟ້າສີຄາມອັນດຽວກັນ, ມີເຮືອນຮົ້ວສວນອັນດຽວກັນ ກໍ່ຄວນເປັນຄືຄອບຄົວດຽວກັນ. ປະຊາຊາດໃນໂລກ ຄວນຍຶດໝັ້ນ ແນວຄິດ “ໃຕ້ຟ້ານີ້ລ້ວນແຕ່ແມ່ນຄອບຄົວດຽວກັນ”, ຄວນເປີດຈິດໃຈໃຫ້ກວ້າງກວາງອອກ, ເຂົ້າອົກເຂົ້າໃຈກັນ, ສະແຫວງຫາຄວາມຄ້າຍຄືກັນໃນຄວາມແຕກຕ່າງ ແລະພະຍາຍາມອອກແຮງຮ່ວມກັນສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ.

ໃນປີ 2013, ຂ້າພະເຈົ້າ ໄດ້ສະເໜີຂໍ້ລິເລີ່ມ ວ່າດ້ວຍ ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ ເປັນຄັ້ງທຳອິດ. ຂ້າພະເຈົ້າດີໃຈທີ່ເຫັນວ່າ, ມິດຕະພາບ ແລະ ການຮ່ວມມື ລະຫວ່າງ ປະເທດຈີນ ກັບ ບັນດາປະເທດໃນໂລກ ນັບມື້ນັບຂະຫຍາຍຕົວຂຶ້ນຢ່າງບໍ່ຢຸດຢັ້ງ, ແນວຄິດ ວ່າດ້ວຍ ປະຊາຄົມ

ຮ່ວມຊາຕາກຳຂອງມວນມະນຸດ ໄດ້ຮັບການສະໜັບສະໜູນ ແລະ ການຕອບຮັບກໍ່ນັບມື້ນັບຫຼາຍຂຶ້ນ, ແນວຄິດລິເລີ່ມດັ່ງກ່າວ ພວມໄດ້ຫັນຈາກແນວຄວາມຄິດ ມາເປັນ ການປະຕິບັດແລ້ວ.

ຂໍ້ລິເລີ່ມ "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ທີ່ຂ້າພະເຈົ້າສະເໜີນັ້ນ ກໍ່ແມ່ນການເຮັດໃຫ້ປະຊາຄົມຮ່ວມຊາຕາກຳຂອງມວນມະນຸດກາຍເປັນຜົນຕົວຈິງ. ຕະຫຼອດໄລຍະ 4 ປີຜ່ານມາ, ການກໍ່ສ້າງ "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ໄດ້ກາຍເປັນເວທີແຫ່ງການຮ່ວມມືຂະໜາດໃຫຍ່ ທີ່ເຮັດໃຫ້ປະເທດກ່ຽວຂ້ອງບັນລຸການພັດທະນາຮ່ວມກັນ. ຄວາມເວົ້າບູຮານກ່າວວ່າ: "ແມ່ນ້ຳນ້ອຍຫຼາຍສາຍໄຫລໂຮມເຂົ້າກັນເປັນທະເລອັນກວ້າງໃຫຍ່ໄພສານ, ແສງດາວນ້ອຍໆຫຍິບໆຫຍັບໆໂຮມເຂົ້າກັນເປັນລະບົບດາວທົ່ວຈັກກະວານ". ຂ້າພະເຈົ້າເຊື່ອໝັ້ນເປັນຢ່າງຍິ່ງວ່າ, ຖ້າຫາກທຸກຝ່າຍຫາກສ້າງແນວຄວາມຄິດປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ, ພ້ອມກັນວາງແຜນ ພ້ອມກັນປະຕິບັດ, ຍຶດໝັ້ນອອກແຮງພະຍາຍາມເທື່ອລະເລັກເທື່ອລະໜ້ອຍ, ສະສົມເປັນເວລາຫຼາຍເດືອນຫຼາຍປີຢ່າງບໍ່ລົດລະ ກໍ່ຈະສາມາດບັນລຸເປົ້າໝາຍ ການສ້າງແນວຄວາມຄິດປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ ໄດ້ຢ່າງແນ່ນອນ.

ທ່ານຍິງ, ທ່ານຊາຍ ແລະ ເພື່ອນມິດທັງຫຼາຍ!

ເມື່ອເວົ້າເຖິງຄວາມໝາຍ ຂອງ ປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ ກໍ່ແມ່ນການຮັດແໜ້ນການພົວພັນຂອງອະນາຄົດຊາຕາກຳຂອງທຸກເຊື້ອຊາດ ຂອງທຸກປະເທດ, ຮ່ວມກັນຜ່ານຜ່າອຸປະສັກພາຍຸລົມແດງ ແລະ ພ້ອມກັນຈະເລີນຮຸ່ງເຮືອງ, ອອກແຮງເຮັດໃຫ້ຄອບຄົວໃຫຍ່ເທິງໂລກ ທີ່ເຮົາເກີດຢູ່ນີ້ ແລະ ເຕີບໃຫຍ່ຢູ່ນີ້ ເຕັມໄປດ້ວຍຄວາມຜາສຸກປອງດອງ, ເຮັດໃຫ້ຄວາມມຸ້ງມາດປາດຖະໜາໃນການຈະມີຊີວິດການເປັນຢູ່ທີ່ສວຍງາມດີງາມຂອງປະຊາຊາດໃນໂລກ ປາກົດຜົນເປັນຈິງ.

——**ພວກເຮົາຕ້ອງໄດ້ພະຍາຍາມສ້າງໂລກທີ່ໄກຈາກຄວາມຢ້ານກົວ ແລະ ມີຄວາມປອດໄພຢ່າງທົ່ວເຖິງ.** ເມື່ອເບິ່ງຄືນຂະບວນການພັດທະນາຂອງອາລິຍະທຳມະນຸດເຫັນວ່າ, ເຖິງວ່າຫຼາຍພັນໝື່ນປີຜ່ານ

ມາ ມະນຸດຄອງຄອຍສັນຕິພາບມາໂດຍຕະຫຼອດ, ແຕ່ວ່າສົງຄາມພັດບໍ່ເຄີຍຫ່າງໄກຈັກເທື່ອ, ມະນຸດໄດ້ປະເຊີນໜ້າກັບໄພຂົ່ມຂູ່ຂອງແປວໄຟສົງຄາມ. ມະນຸດດຳລົງຄົງຕົວຢູ່ໂລກໜ່ວຍດຽວກັນ, ຄວາມປອດໄພຂອງປະເທດໜຶ່ງບໍ່ຄວນສ້າງຂຶ້ນບົນຄວາມບໍ່ປອດໄພຂອງອີກປະເທດໜຶ່ງ, ໄພຂົ່ມຂູ່ທີ່ອີກປະເທດໜຶ່ງປະເຊີນຢູ່ກໍ່ອາດກາຍເປັນສິ່ງທ້າທາຍຕໍ່ປະເທດຂອງຕົນກໍ່ເປັນໄດ້. ເມື່ອປະເຊີນໜ້າກັບໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງທີ່ນັບມື້ສະຫຼັບສັບຊ້ອນ ແລະ ຫຼາກຫຼາຍນີ້, ການຕໍ່ສູ້ແບບສອງຕໍ່ສອງກໍ່ເຮັດບໍ່ໄດ້ ແລະ ການງຶມງວາຍເຊື່ອຖືເອົາແຕ່ກຳລັງອາວຸດກໍ່ຍິ່ງບໍ່ຄວນ. ພວກເຮົາຄວນຍຶດໝັ້ນທັດສະນະຄວາມປອດໄພໃໝ່ ທີ່ເປັນແບບຮ່ວມກັນ, ສັງລວມ, ຮ່ວມມື ແລະ ຍືນຍົງ, ສ້າງໃຫ້ເປັນສະພາບການທີ່ມີຄວາມສະເໝີພາບທ່ຽງທຳ ແລະ ຮ່ວມກັນສ້າງ ຮ່ວມກັນຊົມໃຊ້, ຮ່ວມກັນກຳຈັດແຫຼ່ງກຳເນີດຕົ້ນເຫດຂອງສົງຄາມ, ຮ່ວມກັນປົດປ່ອຍຊ່ວຍເຫຼືອປະຊາຊົນທັງຫຼາຍທີ່ຖືກໂຈມຕີດ້ວຍກະສຸນລູກປືນ, ຮ່ວມກັນປົກປ້ອງເດັກນ້ອຍ-ແມ່ຍິງທີ່ຖືກຈູດເຜົາດ້ວຍແປວໄຟແຫ່ງສົງຄາມ, ເຮັດໃຫ້ແສງແດດແຫ່ງສັນຕິພາບສາດສ່ອງໃສ່ທົ່ວທຸກແຜ່ນດິນ ແລະ ເຮັດໃຫ້ທຸກໆຄົນມີຄວາມສະຫງົບ ແລະ ສັນຕິ.

——**ພວກເຮົາຕ້ອງໄດ້ພະຍາຍາມສ້າງໂລກທີ່ຫ່າງໄກຈາກຄວາມທຸກຍາກ ແລະ ມີຄວາມຈະເລີນຮຸ່ງເຮືອງຮ່ວມກັນ**. ໂລກໃນທຸກມື້ນີ້, ລະດັບເຕັກນິກວັດຖຸໄດ້ພັດທະນາໄປຈົນຄົນບູຮານບໍ່ສາມາດຈິນຕະນາການໄດ້, ແຕ່ວ່າບັນຫາການພັດທະນາທີ່ບໍ່ດຸ່ນດ່ຽງ ແລະ ບໍ່ເຕັມສ່ວນ ຍັງຄົງຕົວຢູ່ຢ່າງກວ້າງຂວາງ, ຄວາມແຕກໂຕນຂອງການພັດທະນາ ລະຫວ່າງ ຊີກໂລກເໜືອ ແລະ ຊີກໂລກໃຕ້ (ປະເທດພັດທະນາແລ້ວກັບ ປະເທດກຳລັງພັດທະນາ) ຍັງແຕກໂຕນກັນຫຼາຍ, ຄວາມທຸກຍາກ ແລະ ຄວາມອຶດຫິວຍັງຄົງໜັກໜ່ວງ, ຄວາມຄາດເຄື່ອນຂອງຕົວເລກໃໝ່ພວມກໍ່ຕົວຂຶ້ນ, ຍັງມີປະຊາຊາດໃນໂລກຈຳນວນຫຼາຍຍັງດຳລົງຊີວິດຢູ່ໃນຄວາມທຸກຍາກ. ຖ້າຫາກວ່າພວກເຮົາຍັງຍຶດໝັ້ນແນວຄິດໂລຊີກ ແບບ “ເຈົ້າປະລາໄຊ ຂ້ອຍ

ຊະນະ ແລະ ຜູ້ຊະນະຕ້ອງເໜືອກວ່າຕະຫຼອດ" ຫລືວ່າ ຍາມໃດກໍ່ໃຊ້ວິທີທີ່ "ເຈົ້າຮ້າຍ ຂ້ອຍຕ້ອງຮ້າຍກວ່າ ແລະ ຖືເອົາຜູ້ຢູ່ໃກ້ເປັນສັດຕູ", ຜົນສຸດທ້າຍແນ່ນອນວ່າຈະເປັນການອັດຕັນປະຕູຂອງຜູ້ອື່ນ, ທັງເປັນການອັດຕັນເສັ້ນທາງຂອງຕົນເອງ, ເປັນການກັດເຊາະກົກຮາກການພັດທະນາຂອງຕົນເອງ ແລະ ເປັນການທຳລາຍອະນາຄົດຂອງທົ່ວມວນມະນຸດອີກດ້ວຍ. ພວກເຮົາຄວນຍຶດໝັ້ນທັດສະນະແນວຄິດ ທີ່ "ເຈົ້າດີ ຂ້ອຍກໍ່ດີ ພວກເຮົາດີນຳກັນ (ພັດທະນາໄປນຳກັນ)", ຊຸກຍູ້ເສດຖະກິດໂລກາພິວັດທີ່ເປີດກວ້າງ, ເອື້ອອຳນວຍ, (ມີຜົນປະໂຫຍດ) ທົ່ວເຖິງ, ດຸ່ນດ່ຽງ ແລະ ຮັບຜົນປະໂຫຍດຮ່ວມກັນ; ສ້າງເງື່ອນໄຂທີ່ດີໃຫ້ແກ່ການພັດທະນາຮ່ວມກັນຂອງມວນມະນຸດ, ຮ່ວມກັນຊຸກຍູ້ການພັດທະນາສູ່ຄວາມຈະເລີນຮຸ່ງເຮືອງຂອງບັນດາປະເທດໃນໂລກ, ຮ່ວມກັນກຳຈັດຄວາມທຸກຍາກຫຼ້າຫຼັງທີ່ປະຊາຊາດທັງຫຼາຍໄດ້ປະສົບພົບພໍ້ຢູ່, ຮ່ວມກັນສ້າງຊີວິດການເປັນຢູ່ ທີ່ບໍ່ຕ້ອງເປັນກັງວົນຕໍ່ເຄື່ອງກິນຂອງໃຊ້ໃຫ້ແກ່ເດັກນ້ອຍທັງຫຼາຍໃນທົ່ວໂລກ, ເຮັດໃຫ້ໝາກຜົນແຫ່ງການພັດທະນາໄປທົ່ວເຖິງບັນດາປະເທດໃນໂລກ, ເຮັດໃຫ້ຄົນທັງຫຼາຍໄດ້ຊົມໃຊ້ ແລະ ມີຊີວິດທີ່ອຸດົມສົມບູນຮັ່ງມີຜາສຸກ.

——**ພວກເຮົາຕ້ອງໄດ້ພະຍາຍາມສ້າງໂລກທີ່ຫ່າງໄກຈາກການປິດກັ້ນ ແລະ ສ້າງເປັນໂລກທີ່ເປີດກວ້າງ ແລະ ເອື້ອອຳນວຍ.** ຄຳເວົ້າບູຮານຈີນກ່າວວ່າ: "ສັບພະສິ່ງໃນໂລກ ຂະຫຍາຍຕົວໄປພ້ອມກັນ ແຕ່ບໍ່ແມ່ນທຳຮ້າຍກັນ, ເດີນທາງຮ່ວມກັນແຕ່ບໍ່ສວນທາງ ຂັດແຍ່ງກັນ". ຄວາມຈະເລີນຮຸ່ງເຮືອງຂອງອາລິຍະທຳຄວາມກ້າວໜ້າຂອງມວນມະນຸດ ບໍ່ສາມາດປາດສະຈາກການສະແຫວງຫາຄວາມຄ້າຍຄືກັນໃນຄວາມແຕກຕ່າງ ແລະ ການເປີດກວ້າງເອື້ອອຳນວຍ, ຈະບໍ່ສາມາດຫ່າງໄກຈາກການແລກປ່ຽນ, ຖອດຖອນ ແລະ ຮ່ຳຮຽນບົດຮຽນນຳກັນດ້ານອາລິຍະທຳ. ປະຫວັດສາດຮຽກຮ້ອງໃຫ້ອາລິຍະທຳຂອງມວນມະນຸດສະແດງສີສັນແຕກຕ່າງກັນອອກມາພ້ອມກັນ, ອາລິຍະທຳທີ່ແຕກຕ່າງກັນ ຄວນຢູ່ຮ່ວມກັນຢ່າງກົມກຽວປອງດອງ ແລະ ສະແດງຄວາມໂດດເດັ່ນອອກມານຳກັນ, ຮ່ວມກັນສະໜອງກຳລັງແຮງທາງດ້ານຈິດໃຈຕໍ່ການພັດທະນາຂອງມວນມະນຸດ. ພວກເຮົາຄວນຍຶດໝັ້ນທັດສະນະແນວຄິດທີ່ເຮັດໃຫ້ໂລກມີສີສັນຫຼາກຫຼາຍ ແລະ ມີອາລິຍະທຳທີ່ມີຫຼາຍຮູບຫຼາຍແບບ, ເຮັດໃຫ້ອາລິຍະທຳປະເພດຕ່າງໆທີ່ມະນຸດປະດິດສ້າງຂຶ້ນມີການແລກ

ປ່ຽນກັນ, ຮ່ວມກັນປັກຖັກອອກມາເປັນຮູບພາບທີ່ມີລວດລາຍອາລັງການ, ຮ່ວມກັນກຳຈັດປ້ອມປ້ອງກັນດ້ານວັດທະນະທຳໃນຊີວິດການເປັນຢູ່ຕົວຈິງ, ຮ່ວມກັນຕ້ານທານຕໍ່ທັດສະນະຜິດເຂວທີ່ກີດຂວາງຕໍ່ການແລກປ່ຽນທາງດ້ານແນວຄິດຈິດໃຈຂອງມະນຸດ, ຮ່ວມກັນທັບມ້າງການແບ່ງແຍກທາງຈິດໃຈທີ່ເປັນການກີດຂວາງຕໍ່ການພົວພັນຂອງມະນຸດ, ເຮັດໃຫ້ອາລິຍະທຳຕ່າງໆຢູ່ຮ່ວມກັນຢ່າງກົມກຽວປອງດອງ ແລະເຮັດໃຫ້ຄົນທັງຫຼາຍຮັບຮູ້ເຖິງຄວາມສົດຊື່ນຂອງວັດທະນະທຳ.

**——ພວກເຮົາຕ້ອງໄດ້ຮ່ວມກັນສ້າງໂລກທີ່ເປັນ ພູຂຽວ, ນ້ຳໃສ, ສະອາດ ແລະ ສວຍງາມ. ໜ່ວຍໂລກ ແມ່ນເຮືອນຢູ່ຮ່ວມກັນຂອງມວນມະນຸດ, ທັງແມ່ນເຮືອນຢູ່ແຫ່ງດຽວຂອງມະນຸດໃນເທື່ອປະຈຸບັນ.** ປະຈຸບັນ, ມີຄົນພວມຊອກຫາເຮືອນຢູ່ໃໝ່ຂອງມະນຸດຢູ່ນອກອາວະກາດ, ແຕ່ວ່າມັນຍັງເປັນຄວາມໄຝ່ຝັນອັນຍາວໄກຢູ່. ໃນອະນາຄົດທີ່ສາມາດຄາດເດົາໄດ້ນີ້, ມະນຸດຍັງຕ້ອງໄດ້ໃຊ້ຊີວິດຢູ່ເທິງໂລກນີ້ຕໍ່ໄປ. ນີ້ແມ່ນຄວາມຈິງທີ່ບໍ່ສາມາດປ່ຽນແປງໄດ້. ພວກເຮົາຄວນຮ່ວມກັນປົກປັກຮັກສາເຮືອນຢູ່ເທິງໜ່ວຍໂລກນີ້ໃຫ້ດີ, ເພື່ອຕົວພວກເຮົາເອງ ແລະ ເພື່ອລູກຫຼານລຸ້ນຄົນຕໍ່ໄປ. ພວກເຮົາຄວນຍຶດໝັ້ນທັດສະນະແນວຄິດຄົນກັບທຳມະຊາດຢູ່ຮ່ວມກັນ, ຕ້ອງໄດ້ປະຕິບັດກັບທຳມະຊາດ ຄືກັນກັບປະຕິບັດກັບສິ່ງທີ່ມີຊີວິດ, ຕ້ອງມີຄວາມຢຳເກງຕໍ່ທຳມະຊາດ, ເຄົາລົບທຳມະຊາດ, ສອດຄ່ອງກັບທຳມະຊາດ ແລະ ປົກປັກຮັກສາທຳມະຊາດ , ຮ່ວມກັນປົກປ້ອງເຮືອນຢູ່ເທິງໜ່ວຍໂລກທີ່ພວກເຮົາບໍ່ສາມາດມີສິ່ງອື່ນມາທົດແທນໄດ້ນີ້ໃຫ້ດີ, ຮ່ວມກັນປິ່ນປົວຮອຍບາດແຜຂອງສະພາບແວດລ້ອມນິເວດນຳກັນ, ຮ່ວມກັນສ້າງເປັນເຮືອນຢູ່ຂອງມວນມະນຸດທີ່ກົມກຽວປອງດອງຜາສຸກ ແລະ ໜ້າຢູ່ຮ່ວມກັນ, ເຮັດໃຫ້ທຳມະຊາດນິເວດນີ້ໄດ້ພັກຜ່ອນຟື້ນກຳລັງ, ເຮັດໃຫ້ທຸກຄົນໄດ້ມີພູຂຽວ ແລະ ນ້ຳໃສ ຮ່ວມກັນ.

ທ່ານຍິງ, ທ່ານຊາຍ, ເພື່ອນມິດທັງຫຼາຍ

ປະຈຸບັນ, ສະພາບການຂອງໂລກພວມມີການປ່ຽນແປງ, ສະພາບການພັດທະນາກໍ່ປ່ຽນແປງໄປ, ບັນດາພັກການເມືອງ ກໍ່ຕ້ອງໄດ້ປັບໃຫ້ເຂົ້າກັບກະແສການພັດທະນາໃນຍຸກປະຈຸບັນ, ກຳແໜ້ນທ່າແຮງຄວາມກ້າວໜ້າຂອງມະນຸດ ແລະ ສອດຄ່ອງກັບຄວາມຄອງຄອຍຮ່ວມກັນຂອງປະຊາຊົນ; ຖືເອົາການພັດທະນາ

ຂອງຕົນ ຕິດແໜ້ນກັບ ການພັດທະນາຂອງປະເທດຊາດ, ເຊື້ອຊາດ ແລະ ມວນມະນຸດ. ພວກເຮົາຄວນວາງທັດສະນະຍາວໄກ, ກ້າຮັບຜິດຊອບ, ແນໃສ່ສະພາບຂອງປະເທດຕົນເອງ ແລະ ໃນໂລກ, ແນໃສ່ສະພາບລວມ, ອະນາຄົດຍາວໄກ ແລະ ມີຄວາມຕື່ນຕົວແບກຫາບຄວາມຮັບຜິດຊອບແຫ່ງຍຸກສະໄໝ. ພວກເຮົາຄວນລົງເລິກຕິດແທດຮັບຮູ້ເຖິງສະພາບຊີວິດຂອງປະຊາຊົນ, ຖືເອົາຄວາມຮຽກຮ້ອງຕ້ອງການຂອງປະຊາຊົນທັງຫຼາຍ ຫັນເປັນ ທັດສະນະແນວຄິດ, ວັດຖຸປະສົງ, ເປົ້າໝາຍ ຂອງພັກ ແລະ ກຳນົດຮ່າງແຜນການຈັດຕັ້ງປະຕິບັດທີ່ສອດຄ່ອງກັບຄວາມເປັນຈິງ. ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດແມ່ນຕ້ອງການການເຂົ້າຮ່ວມຢ່າງທົ່ວເຖິງຂອງປະຊາຊາດໃນໂລກ. ພວກເຮົາຄວນເຕົ້າໂຮມຊົນເຜົ່າເຊື້ອຊາດທີ່ແຕກຕ່າງກັນ, ອາລິຍະທຳທີ່ແຕກຕ່າງກັນ, ວັດທະນະທຳທີ່ແຕກຕ່າງກັນ ແລະ ເຂດແຄວ້ນທີ່ແຕກຕ່າງກັນ ເພື່ອຮ່ວມກັນສ້າງພາລະກິດອັນຍິ່ງໃຫຍ່ ແຫ່ງ ປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ.

ການບັນລຸຄວາມຝັນອັນຍິ່ງໃຫຍ່ນີ້ ແມ່ນຕ້ອງການສະຕິປັນຍາ ແລະ ກຳລັງແຮງຈາກທຸກຝ່າຍ. ພວກເຮົາຄວນມີການລະດົມແນວຄວາມຄິດຢ່າງກວ້າງຂວາງຈາກ ທຸກທິດ, ຫຼາຍລະດັບ ແລະ ທຸກມູມມອງ, ມີການສະຫຼຸບຖອດຖອນບົດຮຽນຈາກພຶດຕິກຳຕົວຈິງ, ຊອກຫາແນວຄວາມຄິດ, ຍົກລະດັບແນວຄິດ ແລະ ຍາດໄດ້ກຳລັງແຮງຂອງການຂັບເຄື່ອນ. ພັກການເມືອງທີ່ແຕກຕ່າງກັນຂອງແຕ່ລະປະເທດ ຄວນເພີ່ມທະວີຄວາມເຊື່ອໝັ້ນເຊິ່ງກັນແລະກັນ, ເພີ່ມທະວີການປະສານງານ, ຮັດແໜ້ນປະສານສົມທົບກັນ ບົນພື້ນຖານແຫ່ງການຊອກຄົ້ນສ້າງການພົວພັນສາກົນແບບໃໝ່ ສ້າງເປັນການພົວພັນ ລະຫວ່າງ ບັນດາພັກການເມືອງແບບໃໝ່ ທີ່ສະແຫວງຫາຄວາມຄ້າຍຄືກັນໃນຄວາມແຕກຕ່າງ, ເຄົາລົບນັບຖືເຊິ່ງກັນແລະກັນແລະ ຮໍ່າຮຽນແລກປ່ຽນບົດຮຽນນຳກັນ; ສ້າງເຄືອຂ່າຍການຮ່ວມມືແລກປ່ຽນ ລະຫວ່າງ ພັກການເມືອງສາ ກົນ ທີ່ມີຫຼາຍຮູບແບບ ແລະ ຫຼາຍລະດັບ ເຕົ້າໂຮມກັນເຂົ້າເປັນກຳລັງແຮງເຂັ້ມແຂງຍິ່ງໃຫຍ່ ສ້າງເປັນປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ.

ວຽກຕ້ອງໄດ້ເຮັດ ຈິ່ງຈະສ້າງເປັນພາລະກິດໄດ້, ເສັ້ນທາງຈະຕ້ອງໄດ້ເດີນໜ້າຕໍ່ໄປ ຈິ່ງຈະສາມາດບຸກເບີກເສັ້ນທາງອະນາຄົດໃນຕໍ່ໜ້າໄດ້. ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ ແມ່ນຂະບວນປະຫວັດສາດ, ເຊິ່ງບໍ່ສາມາດຈະເກີດຂຶ້ນພາຍໃນບາດດຽວໄດ້ ແລະ ຈະບໍ່ສະດວກສະບາຍຕະຫຼອດ

ທາງ, ສະນັ້ນ ຈຶ່ງຈໍາເປັນຕ້ອງໄດ້ພະຍາຍາມອອກແຮງບາກບັ່ນຜ່ານຜ່າເປັນເວລາຍາວນານ. ເພື່ອສ້າງເປັນປະຊາຄົມຮ່ວມຊາຕາກໍາຂອງມວນມະນຸດ, ພວກເຮົາຄວນເປັນຈິດໜຶ່ງໃຈດຽວ ບໍ່ປະຖິ້ມກັນ, ພະຍາຍາມຢ່າງບໍ່ລົດລະ, ບໍ່ປະຖິ້ມຄວາມຝັນ ຍ້ອນສະພາບຕົວຈິງສະຫລັບສັບຊ້ອນ ແລະ ຍິ່ງບໍ່ຄວນປະຖິ້ມການສະແຫວງຫາ ຍ້ອນອຸດົມການຍາວໄກເກີນເອື້ອມ.

ທ່ານຍິງ, ທ່ານຊາຍ, ເພື່ອນມິດທັງຫຼາຍ

ພັກກອມມູນິດຈີນ ແມ່ນພັກທີ່ສະແຫວງຫາຄວາມສຸກໃຫ້ແກ່ປະຊາຊົນຈີນ, ທັງແມ່ນພັກທີ່ສູ້ຊົນເພື່ອພາລະກິດຄວາມກ້າວໜ້າຂອງມວນມະນຸດ. ພັກກອມມູນິດຈີນ ແມ່ນພັກການເມືອງໃຫຍ່ທີ່ສຸດໃນໂລກ. ຂ້າພະເຈົ້າເຄີຍເວົ້າວ່າ ຖ້າໃຫຍ່ ກໍ່ຕ້ອງເຮັດໃຫ້ເປັນແບບໃຫຍ່. ສິ່ງທີ່ພັກກອມມູນິດຈີນເຮັດທຸກຢ່າງ ກໍ່ແມ່ນເພື່ອສະແຫວງຫາຄວາມສຸກໃຫ້ແກ່ປະຊາຊົນຈີນ, ເພື່ອການຟື້ນຟູຄວາມສີວິໄລຂອງເຊື້ອຊາດຈີນ, ທັງແມ່ນເພື່ອສະແຫວງຫາສັນຕິພາບ ແລະ ການພັດທະນາຂອງມວນມະນຸດ. ພວກຂ້າພະເຈົ້າຈະເຮັດວຽກຂອງຕົນເອງໃຫ້ດີ, ເຊິ່ງຈະເປັນການປະກອບສ່ວນເຂົ້າໃນການສ້າງປະຊາຄົມຮ່ວມຊາຕາກໍາຂອງມວນມະນຸດ; ພວກຂ້າພະເຈົ້າ ຍັງຈະຊຸກຍູ້ໃຫ້ການພັດທະນາຂອງປະເທດຈີນ ສ້າງກາລະໂອກາດຫຼາຍກວ່າເກົ່າໃຫ້ແກ່ໂລກ, ຜ່ານການລົງເລິກດ້ານພຶດຕິກໍາຕົວຈິງຂອງຕົນເອງ ເພື່ອຊອກຄົ້ນກົດເກນການພັດທະນາຂອງສັງຄົມມວນມະນຸດ ແລະ ຮ່ວມກັນຊົມໃຊ້ແບ່ງປັນກັບບັນດາປະເທດໃນໂລກ. ພວກຂ້າພະເຈົ້າ ຈະບໍ່ "ນໍາເຂົ້າ" ຮູບແບບຂອງຕ່າງປະເທດ ແລະ ຈະບໍ່ "ສົ່ງອອກ" ຮູບແບບຂອງຈີນ, ຈະບໍ່ຮຽກຮ້ອງໃຫ້ປະເທດອື່ນ "ລອກແບບ (ສໍາເນົາ)" ວິທີການຂອງປະເທດຈີນ. ພັກກອມມູນິດຈີນ ຈະຢຶດໝັ້ນປະຕິບັດຄືດັ່ງເນື້ອໃນລຸ່ມນີ້:

**ໜຶ່ງ, ຈະປະກອບສ່ວນເຂົ້າໃນພາລະກິດສັນຕິພາບ ແລະ ຄວາມສະຫງົບຂອງໂລກ ຢ່າງສະເໝີຕົ້ນສະໝີປາຍ.** ກ່ອນໜ້ານີ້ ເກືອບ 100 ປີ, ພັກກອມມູນິດຈີນ ໄດ້ກໍາເນີດເກີດຂຶ້ນທ່າມກາງສັງຄົມປະເທດຈີນທີ່ດຸເດືອດຂ້ຽວຂາດ, ພາລະກິດອັນໜຶ່ງໃນການສ້າງຕັ້ງພັກ ກໍ່ແມ່ນ ການສິ້ນສຸດສະພາບການ ໃນໄລຍະກາງສະຕະວັດທີ 19 ຂອງປະເທດຈີນ ທີ່ເກີດສົງຄາມຄວາມບໍ່ສະຫງົບແບບບໍ່ຢຸດຢ່ອນ ແລະ ປະຊາຊົນບໍ່ສາມາດໃຊ້ຊີວິດປົກກະຕິໄດ້. ນັບແຕ່ ປີ 1921 ຫາ ປີ 1949, ເພື່ອເຮັດໃຫ້ປະເທດຈີນບັນລຸສັນຕິພາບ,

ມີຄວາມໝັ້ນຄົງ ແລະ ເຮັດໃຫ້ປະຊາຊົນຈີນມີວຽກເຮັດງານທຳ, ມີຊີວິດການເປັນຢູ່ທີ່ດີ, ພັກກອມມູນິດຈີນ ໄດ້ເຕົ້າໂຮມຄວາມສາມັກຄີ ນຳພາປະຊາຊົນຈີນດຳເນີນການຕໍ່ສູ້ດ້ວຍກຳລັງອາວຸດ ເປັນເວລາ 28 ປີ ແລະ ມີການເສຍສະຫລະຢ່າງຫຼວງຫຼາຍມະຫາສານ. ສະນັ້ນ, ຊາວພັກກອມມູນິດຈີນ ຈຶ່ງຮັບຮູ້ຢ່າງເລິກເຊິ່ງຕໍ່ຄວາມລ້ຳຄ່າຂອງສັນຕິພາບ, ທັງມີຄວາມຕັດສິນໃຈຢ່າງເດັດດ່ຽວທີ່ຈະປົກປັກຮັກສາສັນຕິພາບ. ປະເທດຈີນຈະຍົກສູງຄັນທຸງແຫ່ງສັນຕິພາບ, ການພັດທະນາ, ການຮ່ວມມື ແລະ ການຮັບໄຊຊະນະຮ່ວມກັນ, ຈະເດີນຕາມເສັ້ນທາງການພັດທະນາແບບສັນຕິ ຢ່າງສະເໝີຕົ້ນສະເໝີປາຍ, ຕັ້ງໜ້າຊຸກຍູ້ການສ້າງການພົວພັນຄູ່ຮ່ວມມືແບບທົ່ວໂລກຢ່າງສ້າງສັນ, ຕື່ນຕົວເຂົ້າຮ່ວມຂະບວນການແກ້ໄຂທາງການເມືອງ ຕໍ່ ບັນຫາຮ້ອນ ແລະ ບັນຫາຍາກຂອງສາກົນ. ປະຈຸບັນ, ປະເທດຈີນໄດ້ສົ່ງຜູ້ຮັກສາສັນຕິບານສາກົນ ລວມປະມານ 36,000 ກວ່າເທື່ອຄົນແລ້ວ, ໄດ້ກາຍເປັນປະເທດທີ່ສົ່ງທະຫານຫຼາຍ ແລະ ປະກອບທຶນຮອນຫຼັກຕໍ່ການປະຕິບັດການປົກປ້ອງສັນຕິພາບຂອງສະຫະປະຊາຊາດ. ໃນຂະນະດຽວກັນນັ້ນ, ກຳລັງທະຫານຂອງຈີນຈຳນວນ 2500 ຄົນ ກໍ່ພວມກຳລັງຕໍ່ສູ້ກັບຄວາມຫຍຸ້ງຍາກ ແລະ ໄພອັນຕະລາຍ ຢູ່ເຂດປະຕິບັດງານຮັກສາຄວາມປອດໄພ ຂອງ ສະຫະປະຊາຊາດ 8 ແຫ່ງ, ປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງຂອງທ້ອງຖິ່ນນັ້ນໆ. ປະເທດຈີນ ຈະຕັ້ງໜ້າເຂົ້າຮ່ວມການປະຕິຮູບ ແລະ ການສ້າງສາລະບົບການຄຸ້ມຄອງບໍລິຫານທົ່ວໂລກ, ຊຸກຍູ້ໃຫ້ລະບຽບການເສດຖະກິດ-ການເມືອງຂອງສາກົນພັດທະນາໄປຕາມທິດທີ່ທ່ຽງທຳ ແລະ ສົມເຫດສົມຜົນກວ່າເກົ່າ. ບໍ່ວ່າປະເທດຈີນຈະພັດທະນາໄປຮອດລະດັບໃດກໍ່ຕາມ ຈະບໍ່ເປັນເຈົ້າອຳນາດ ແລະ ບໍ່ຂະຫຍາຍອິດທິພົນ ຕະຫຼອດການະນານ. ພວກຂ້າພະເຈົ້າສະເໜີລິເລີ່ມໃຫ້ບັນດາພັກການເມືອງໃນໂລກຮ່ວມກັນກັບພວກຂ້າພະເຈົ້າ, ພ້ອມກັນເປັນຜູ້ສ້າງສາສັນຕິພາບຂອງໂລກ, ເປັນຜູ້ປະກອບສ່ວນເຂົ້າໃນການພັດທະນາຂອງໂລກ ແລະ ເປັນຜູ້ປົກປັກຮັກສາລະບຽບການຂອງສາກົນ.

**ສອງ, ຈະປະກອບສ່ວນເຂົ້າໃນການພັດທະນາຮ່ວມກັນໃນໂລກຢ່າງສະເໝີຕົ້ນສະເໝີປາຍ.** ພັກກອມມູນິດຈີນ ແມ່ນມາຈາກປະຊາຊົນ ແລະ ຂະຫຍາຍຕົວເຂັ້ມແຂງໂດຍອີງໃສ່ປະຊາຊົນ, ນັບແຕ່ໃດມາກໍ່ມີຄວາມຮູ້ສຶກຢ່າງເລິກເຊິ່ງຕໍ່ປະຊາຊົນ, ເຊິ່ງນອກຈາກຈະມີຄວາມຮູ້ສຶກອັນເລິກເຊິ່ງຕໍ່ປະຊາຊົນຈີນແລ້ວ, ຍັງເປັນຄວາມຮູ້ສຶກດູດດື່ມຕໍ່ປະຊາຊາດໃນໂລກ; ນອກຈາກຍິນດີຈະສ້າງຄວາມຜາສຸກໃຫ້ແກ່ປະຊາຊົນ

ຈີນແລ້ວ, ຍັງຍິນດີທີ່ຈະສ້າງຄວາມຜາສຸກໃຫ້ແກ່ປະຊາຊາດໃນໂລກ. ຕະຫຼອດໄລຍະຜ່ານມາ, ປະເທດຈີນໄດ້ສະໜອງການຊ່ວຍເຫຼືອລ້າ ແລະ ການກູ້ຢືມພິເສດຈຳນວນຫຼາຍ ໃຫ້ແກ່ບັນດາປະເທດກຳລັງພັດທະນາ, ໄດ້ສະໜອງການສະໜັບສະໜູນດ້ານເຕັກນິກ, ບຸກຄະລາກອນ ແລະ ສະຕິປັນຍາຈຳນວນຫຼາຍ, ໄດ້ສ້າງຫຼາຍໂຄງການທີ່ເປັນການພັດທະນາເສດຖະກິດ-ສັງຄົມ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ຂອງບັນດາປະເທດກຳລັງພັດທະນາ. ໃນປະຈຸບັນ, ນັກວິທະຍາສາດ, ນັກວິສາວະກຳ, ນັກທຸລະກິດ, ພະນັກງານເຕັກນິກ, ພະນັກງານວຽກງານການປິ່ນປົວ, ຄູອາຈານ, ພະນັກງານທົ່ວໄປ, ອາສາສະໝັກ ແລະບຸກຄົນອື່ນໆຂອງຈີນ ກໍ່ພວມບາກບັ່ນສູ້ຊົນຢູ່ເທິງດິນແດນອັນກວ້າງໃຫຍ່ຂອງບັນດາປະເທດກຳລັງພັດທະນາທັງຫຼາຍ ໄດ້ຮ່ວມໄມ້ຮ່ວມມື ແລະ ຄຽງບ່າຄຽງໄຫລ່ກັບປະຊາຊົນທ້ອງຖິ່ນນັ້ນ ຊ່ວຍໃຫ້ເຂົາເຈົ້າປ່ຽນແປງຊາຕາກຳຂອງຕົນເອງ. ອີງຕາມການຈັດວາງແຜນການ ຂອງ ກອງປະຊຸມໃຫຍ່ຄັ້ງທີ 19 ຂອງພັກກອມມູນິດຈີນ, ເມື່ອຮອດ ປີ 2020 ປະເທດຈີນຈະສຳເລັດການສ້າງສັງຄົມອິ່ມໜຳສຳລານຢ່າງຮອບດ້ານ, ຮອດປີ 2035 ປະເທດຈີນຈະບັນລຸການເປັນປະເທດສັງຄົມນິຍົມທີ່ທັນສະໄໝໂດຍພື້ນຖານ, ເມື່ອຮອດກາງສະຕະວັດນີ້ ປະເທດຈີນຈະເປັນປະເທດສັງຄົມນິຍົມທັນສະໄໝເຂັ້ມແຂງ ທີ່ຈະເລີນຮຸ່ງເຮືອງ, ຮັ່ງມີ, ປະຊາທິປະໄຕ, ມີອາລິຍະທຳ, ກົມກຽວປອງດອງ ແລະ ສວຍງາມ. ເຊິ່ງຈະເປັນການສ້າງຄວາມຜາສຸກໃຫ້ແກ່ປະຊາຊົນຈີນ ແລະ ຈະເປັນການສ້າງຄວາມຜາສຸກໃຫ້ແກ່ປະຊາຊາດໃນໂລກອີກດ້ວຍ. ພວກຂ້າພະເຈົ້າສະເໜີ ຮ່ວມກັບບັນດາພັກການເມືອງຈາກບັນດາປະເທດໃນໂລກ ຮ່ວມກັນສ້າງກາລະໂອກາດການຮ່ວມມືນຳກັນໃນໂລກໃຫ້ຫຼາຍກວ່າເກົ່າ, ພະຍາຍາມຊຸກຍູ້ໃຫ້ບັນດາປະເທດໃນໂລກຮ່ວມກັນພັດທະນາ ແລະ ຈະເລີນຮຸ່ງເຮືອງ.

**ສາມ, ຈະປະກອບສ່ວນເຂົ້າໃນການແລກປ່ຽນຖອດຖອນບົດຮຽນດ້ານອາລິຍະທຳຂອງໂລກ ຢ່າງສະເໝີຕົ້ນສະເໝີປາຍ.** ສຸພາສິດບູຮານເວົ້າວ່າ "ກ້ອນຫີນຈາກພູບ່ອນອື່ນ ສາມາດທັບຢົກໄດ້". ນັບແຕ່ໃດມາ, ພັກກອມມູນິດຈີນ ຍາມໃດກໍ່ເນັ້ນໜັກການສ້າງສາຍຕາໂລກະທັດ, ຕັ້ງໜ້າຮໍ່າຮຽນ ແລະ ຖອດຖອນບົດຮຽນຈາກການສ້າງໝາກຜົນອາລິຍະທຳຂອງປະຊາຊາດ, ພ້ອມທັງ ສົມທົບ ແລະ ໝູນໃຊ້ເຂົ້າກັບສະພາບການຕົວຈິງຂອງປະເທດຈີນ. ລັດທິມາກ ແມ່ນຈາລິຍະທຳວິທະຍາສາດທີ່ຊາວພັກກອມມູນິດຈີນຮຽນເອົາ

ຈາກຕ່າງປະເທດ. ພວກຂ້າພະເຈົ້າໄດ້ນຳມາປະສານສົມທົບກັບສະພາບການຕົວຈິງຂອງປະເທດຈີນ, ໄດ້ຊຸກຍູ້ໃຫ້ລັດທິມາກ ຫັນເປັນການໝູນໃຊ້ຢູ່ຈີນ, ຫັນເຂົ້າກັບຍຸກສະໄໝ, ຫັນເຂົ້າກັບມະຫາຊົນເລື້ອຍໆ, ເຮັດໃຫ້ເນື້ອໃນດັ່ງກ່າວ ກາຍເປັນທິດສະດີວິທະຍາສາດທີ່ຊີ້ທິດໃຫ້ພັກກອມມູນິດຈີນ ແລະ ນຳພາປະຊາຊົນຈີນເດີນໜ້າໄປຢ່າງບໍ່ຢຸດຢັ້ງ. ພັກກອມມູນິດຈີນ ຈະຢຶດໝັ້ນຖືເອົາສາຍຕາທີ່ເປີດກວ້າງ ແລະ ຈິດໃຈທີ່ກວ້າງຂວາງ ມາປະຕິບັດຕໍ່ການປະດິດສ້າງດ້ານອາລິຍະທຳຂອງປະຊາຊົນໃນໂລກ, ຍິນດີຈະຮ່ວມກັບປະຊາຊາດໃນໂລກ ແລະ ພັກການເມືອງໃນໂລກ ດຳເນີນການເຈລະຈາພົບປະ ແລະ ແລກປ່ຽນຮ່ວມມືກັນ, ສະໜັບສະໜູນປະຊາຊົນຂອງບັນດາປະເທດ ເພີ່ມທະວີການໄປມາຫາສູ່ລະຫວ່າງປະຊາຊົນ, ການແລກປ່ຽນດ້ານວັດທະນະທຳ ແລະ ມິດຕະພາບລະຫວ່າງປະຊາຊົນ. ໃນອະນາຄົດ 5 ປີຕໍ່ໜ້າ, ພັກກອມມູນິດຈີນ ຈະສະໜອງໂອກາດໃຫ້ພັກການເມືອງຂອງບັນດາປະເທດໃນໂລກ ມາແລກປ່ຽນ ຢູ່ ສປ ຈີນ ຈຳນວນ 15,000 ທົບ. ພວກຂ້າພະເຈົ້າສະເໜີລິເລີ່ມ ໃຫ້ ກອງປະຊຸມສົນທະນາລະດັບສູງ ລະຫວ່າງ ພັກກອມມູນິດຈີນ ກັບ ບັນດາພັກການເມືອງໃນໂລກ ຫັນເປັນກົນໄກ, ເຮັດໃຫ້ກາຍເປັນເວທີສົນທະນາພົບປະການເມືອງລະດັບສູງ ທີ່ມີລັກສະນະເປັນຕົວແທນຢ່າງກວ້າງຂວາງ ແລະ ມີຜົນສະທ້ອນຕໍ່ສາກົນ.

ທ່ານຍິງ, ທ່ານຊາຍ, ເພື່ອນມິດທັງຫຼາຍ

ກ່ອນໜ້ານີ້ 2000 ກວ່າປີຜ່ານມາ, ນັກແນວຄິດບູຮານຂອງຈີນ ຂົງຈື້ ໄດ້ກ່າວໄວ້ວ່າ “ເພື່ອນທີ່ດີມີ 3 ປະເພດ ຄື: ເພື່ອນທີ່ຊື່ສັດ, ເພື່ອນທີ່ມີສັດຈະ, ເພື່ອນທີ່ຮອບຮູ້ທົ່ວທິດ”. ພັກກອມມູນິດຈີນ ຍິນດີຈະເປັນເພື່ອນມິດກັບທຸກຄົນ (ແຮກສ່ຽວ). ຕະຫຼອດໄລຍະຜ່ານມາ, ພັກກອມມູນິດຈີນ ໄດ້ຮັກສາການພົວພັນປົກກະຕິກັບ 400 ກວ່າ ພັກການເມືອງ ແລະ ການຈັດຕັ້ງການເມືອງ ຈາກ 160 ກວ່າປະເທດ ແລະ ເຂດແຄວ້ນໃນໂລກ, “ວົງລ້ອມໝູ່ເພື່ອນ” ນັບມື້ຂະຫຍາຍກວ້າງອອກ. ເມື່ອອ່ອຍໜ້າສູ່ອະນາຄົດ, ພັກກອມມູນິດຈີນ ຍິນດີຈະເພີ່ມທະວີການໄປມາຫາສູ່ກັບບັນດາພັກການເມືອງ ຂອງ ບັນດາປະເທດໃນໂລກ, ຮ່ວມກັນແບ່ງປັນບົດຮຽນໃນການຄຸ້ມຄອງພັກບໍລິຫານປະເທດ, ດຳເນີນການແລກປ່ຽນດ້ານອາລິຍະທຳ, ເພີ່ມທະວີຄວາມເຊື່ອໝັ້ນທາງດ້ານຍຸດທະສາດເຊິ່ງກັນແລະກັນ, ຈະຮ່ວມກັບປະຊາຊາດໃນໂລກຊຸກຍູ້ສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ, ຮ່ວມກັນສ້າງໂລກທີ່ສວຍງາມກວ່າເກົ່າ.

ສຸດທ້າຍນີ້, ຂໍອວຍພອນໃຫ້ກອງປະຊຸມສົນທະນາລະດັບສູງ ລະຫວ່າງ ພັກກອມມູນິດຈີນ ກັບ ບັນດາພັກການເມືອງໃນໂລກ ຈົ່ງປະສົບຜົນສໍາເລັດຢ່າງຈົບງາມ.

ຂໍຂອບໃຈ.